**ສະຫລອງນັກບຸນທັງຫລາຍ**

**ວັນທີ 01 ພະຈິກ 2018**



**ພຣະວໍລະສານໂດຍນັກບຸນມັດເທວ 5,1-12**

ໃນເວລານັ້ນ, ພຣະເຢຊູເຈົ້າທອດພຣະເນດເຫັນຝູງຄົນມາກມາຍ ກໍສະເດັດຂຶ້ນພູ ແລະເມື່ອປະທັບນັ່ງແລ້ວ, ພວກລູກສິດກໍຫຍັບເຂົ້າໃກ້ໆ. ພຣະອົງຈຶ່ງກ່າວສອນພວກເຂົາວ່າ:

ບຸນມະຫາລາບແກ່ຜູ້ມີໃຈຍາກຈົນ, ຍ້ອນວ່າເມືອງສະຫວັນເປັນຂອງໆເຂົາ.

ບຸນມະຫາລາບແກ່ຜູ້ມີໃຈອ່ອນຫວານ, ຍ້ອນວ່າເຂົາຈະໄດ້ເປັນເຈົ້າຂອງແຜ່ນດິນ.

ບຸນມະຫາລາບແກ່ຜູ້ໄດ້ຮັບຄວາມທຸກຮ້ອນ, ຍ້ອນວ່າເຂົາຈະໄດ້ຮັບຄວາມທຸເລົາໃຈ.

ບຸນມະຫາລາບແກ່ຜູ້ຫອດຫິວຄວາມທ່ຽງທຳ, ຍ້ອນວ່າເຂົາຈະໄດ້ອີ່ມໜຳ.

ບຸນມະຫາລາບແກ່ຜູ້ມີໃຈເອັນດູກາລຸນາ, ຍ້ອນວ່າເຂົາຈະໄດ້ຮັບຄວາມເອັນດູກາລຸນາຕອບແທນແລ.

ບຸນມະຫາລາບແກ່ຜູ້ມີໃຈບໍລິສຸດ, ຍ້ອນວ່າເຂົາຈະໄດ້ເຫັນພຣະເປັນເຈົ້າ.

ບຸນມະຫາລາບແກ່ຜູ້ມັກສ້າງຄວາມສັນຕິ, ຍ້ອນເຂົາຈະໄດ້ຊື່ວ່າເປັນບຸດຂອງພຣະເຈົ້າ.

ບຸນມະຫາລາບແກ່ຜູ້ຖືກບັງບຽດຍ້ອນຄວາມທ່ຽງທຳ, ດ້ວຍວ່າເມືອງສະຫວັນເປັນຂອງໆເຂົາ.

ບຸນມະຫາລາບແກ່ພວກເຈົ້າເມື່ອຖືກດ່າວ່າ, ຖືກບັງບຽດ ແລະຖືກໃສ່ຄວາມຕ່າງໆຍ້ອນເຮົາ.

ພວກເຈົ້າຈົ່ງຊື່ນຊົມຍິນດີເຖີດ, ຍ້ອນວ່າພວກເຈົ້າຈະໄດ້ຮັບບຳເນັດອັນຍິ່ງໃຫຍ່ໃນສະຫວັນ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: 5,1-12**

ສຳລັບຊາວພຸດທະສະນິກະຊົນ ພວກເຂົາເຄີຍປະຕິບັດຮີດຄອງປະເພນີໜຶ່ງທີ່ມີຊື່ວ່າ: « ບຸນຫໍ່ເຂົ້າປະດັບດິນ ». ບຸນນີ້ຈັດຂຶ້ນໃນມື້ແຮມ 14 ຄ່ຳເດືອນ 09 ຂອງທຸກປີ ເພື່ອອຸທິດຜົນບຸນສ່ວນກຸສົນໄປຫາເຜດ ຫລື ຍາດພີ່ນ້ອງທີ່ລ່ວງລັບໄປແລ້ວ. ແລະກໍເປັນການແຜ່ເມດຕາໃຫ້ແກ່ສັບພະສັດທັງຫລາຍອີກດ້ວຍ.

ພິທີກຳບຸນຫໍ່ເຂົ້າປະດັບດິນນີ້ມີຢູ່ສອງພາກ: ພາກທີໜຶ່ງຄືພິທີອຸທິດຜົນບຸນສ່ວນກຸສົນໃຫ້ຜູ້ລ່ວງລັບຜ່ານທາງເຂົ້ານ້ຳຊ້ຳປາທີ່ຫໍ່ໄວ້ແລະວາງຕາມຖະໜົນ, ກົກໄມ້ແລະຕາມຜາກຳແພງວັດ. ແລະພາກທີສອງຄືພິທີໄຫວ້ພຣະ, ຟັງເທດ, ຖະຫວາຍທານ (ໃສ່ບາດຢາດນ້ຳແດ່ພຣະສົງສຳມະເນນ). ທ້າຍສຸດແມ່ນການຮັບພອນ.

ບຸນຫໍ່ເຂົ້າປະດັບດິນນີ້ມີຈຸດປະສົງອັນໃດ? ຈຸດປະສົງທຳອິດຄື ການແຈກທານອາຫານໃຫ້ບັນດາດວງວິນຍານທີ່ຍັງຂາດແຄນແລະຫວິກະຫາຍໃຫ້ໄດ້ຮັບຜົນທານຢ່າງອີ່ມໜຳສຳລານ. ຈຸດປະສົງທີສອງຄືການແບ່ງເບົາຄວາມທຸກທໍລະມານຊຶ່ງຜູ້ລ່ວງລັບໄປຕ້ອງໄດ້ໃຊ້ຕາມບາບບຸນຄຸນໂທດທີ່ເຂົາໄດ້ກະທຳເມື່ອເວລາຍັງມີຊີວິດຢູ່. ສິ່ງນີ້ຈະຫລຸດພົ້ນໄດ້ກໍດ້ວຍອາໄສຄຳພາວະນາແລະບຸນກຸສົນຂອງຜູ້ແຜ່ບຸນ.

ສຳລັບພວກເຮົາຜູ້ເປັນກຣິສຕັງກາໂທລິກກໍເຊັ່ນດຽວກັນ,ໃນເດືອນພະຈິກຂອງແຕ່ລະປີ ພຣະກຣິສຕະຈັກກໍເຊື້ອເຊີນພວກເຮົາໃຫ້ລະນຶກຄິດເຖິງເປັນພິເສດບັນດານັກບຸນແລະຍາດຕິພີ່ນ້ອງທີ່ລ່ວງລັບໄປໃນຄຳພາວະນາແລະເປັນຕົ້ນໃນມະຫາບູຊາມິຊຊາ. ຍ້ອນຫຍັງ? ຍ້ອນພວກເຮົາເຊື່ອໝັ້ນໃນພຣະເມດຕາກາລຸນາຂອງພຣະເຈົ້າ, ໃນການໃຫ້ອະໄພຂອງພຣະອົງ. ເພາະຄຳວອນຂໍຂອງພວກເຮົາບໍ່ພຽງແຕ່ມີປະສິດທິຜົນສຳລັບຕົວພວກເຮົາເອງເທົ່ານັ້ນ ແຕ່ຍັງສາມາດຊ່ວຍເຫລືອຜູ້ທີ່ບໍ່ສາມາດຊ່ວຍຕົວເອງໄດ້ຄືບັນດາດວງວິນຍານໃນໄຟຊຳລະອີກດ້ວຍ.

ວັນສະຫລອງນັກບຸນທັງຫລາຍນີ້ຍັງເປັນໂອກາດໃຫ້ພວກເຮົາລະນຶກເຖິງກະແສຮຽກທຳອິດຂອງພວກເຮົາແຕ່ລະຄົນຊຶ່ງໄດ້ຮັບໃນວັນຮັບສິນລ້າງບາບ ອັນແມ່ນກະແສຮຽກຂອງການເປັນຜູ້ສັກສິດ, ເໝືອນກັບພຣະບິດາເຈົ້າສະຫວັນເປັນຜູ້ສັກສິດ. ເພາະສະນັ້ນ, ວາຈາຂອງພຣະເຈົ້າໃນວັນນີ້ຈຶ່ງເປັນເຂັມທິດເບິ່ງທາງໃຫ້ພວກເຮົາໃນການເປັນຜູ້ສັກສິດຕາມນ້ຳພຣະໄທຂອງພຣະເຈົ້າ. ສິ່ງນັ້ນແມ່ນຫຍັງ? ແມ່ນບຸນມະຫາລາບແປດປະການ ຫລືເວົ້າອີກຢ່າງຄື: ຄວາມສຸກແປດປະການນັ້ນເອງ. ຜູ້ທີ່ຢາກມີບຸນຫລືຄວາມສຸກຕ້ອງເປັນຄົນທີ່ມີໃຈຍາກຈົນ, ໃຈສຸພາບ, ໃຈອ່ອນຫວານ, ໃຈເມດຕາກາລຸນາ. ເພາະດວງໃຈເປັນຈຸດສູນກາງຂອງຄວາມຮູ້ສຶກ, ຄວາມປາດຖະໜາ ແລະຄວາມມັກໄດ້ຕ່າງໆ. ຖ້າດວງໃຈຂອງພວກເຮົາດີ, ພວກເຮົາກໍຈະມີຄຳປາກຄຳເວົ້າແລະການກະທຳທີ່ດີ. ກົງກັນຂ້າມ, ຖ້າດວງໃຈຂອງພວກເຮົາບໍ່ມີຄວາມສະຫງົບສຸກ, ການສະແດງອອກແລະກິລິຍາທ່າທີຂອງພວກເຮົາກໍຈະບໍ່ມີຄວາມສຸພາບອ່ອນນ້ອມເຊັ່ນດຽວກັນ. ພຸດທະສາດສະໜາເຄີຍມີຄຳເວົ້າທີ່ວ່າ: ສະຫວັນໃນອົກ, ນະລົກໃນໃຈ. ໝາຍວ່າທຸກສິ່ງລ້ວນແຕ່ສຳພັດໄດ້ດ້ວຍໃຈ.

ຜູ້ທີ່ມີໃຈຍາກຈົນ, ສຸພາບອອ່ນຫວານແລະເມດຕາກາລຸນາຢ່າງແທ້ຈິງນັ້ນແມ່ນໃຜ? ແມ່ນພຣະເຢຊູກຣິສໂຕເຈົ້ານັ້ນເອງ. ແລະພຣະອົງຢາກໃຫ້ພວກເຮົາເປັນເໝືອນພຣະອົງຄືເປັນຜູ້ສັກສິດ ເພື່ອພວກເຮົາຈະໄດ້ຢູ່ຮ່ວມກັບພຣະອົງແຕ່ຍັງຢູ່ໃນໂລກນີ້ ແລະແນ່ນອນໃນໂລກໜ້າອີກດ້ວຍ.

ຕໍ່ຈາກວັນສະຫລອງນັກບຸນທັງຫລາຍແມ່ນວັນພາວະນາອຸທິດໃຫ້ບັນດາຜູ້ລ່ວງລັບໄປ. ອັນເປັນວັນທີ່ພວກເຮົາຜູ້ຍັງຢູ່ໃນໂລກນີ້ສາມາດສະແດງອອກເຖິງຄວາມຮັກເມດຕາຕໍ່ບັນດາຜູ້ລ່ວງລັບໄປທີ່ພວກເຮົາຮູ້ຈັກຫລືບໍ່ຮູ້ຈັກກໍຕາມ ຜ່ານທາງຄຳພາວະນາແລະມະຫາບູຊາມິຊຊາ. ຄຳພາວະນານີ້ບໍ່ພຽງແຕ່ເປັນເຄື່ອງສື່ສານລະຫວ່າງພວກເຮົາຜູ້ເປັນເທົ່ານັ້ນ ແຕ່ຍັງມີຜົນເຖິງຜູ້ລວ່ງລັບໄປອີກດ້ວຍ. ແລະຄຳພາວະນາສື່ສານລະຫວ່າງພວກເຮົາກັບຜູ້ລ່ວງລັບໄປນີ້ພຣະກຣິສຕະຈັກຮຽກວ່າ: « ຄວາມສຳພັນລະຫວ່າງຄົນບຸນ » ຊຶ່ງພວກເຮົາປະກາດອອກມາໃນບົດຂ້າພະເຈົ້າເຊື່ອເຖິງພຣະເປັນເຈົ້າ. ພວກເຮົາເຊື່ອວ່າບັນດາວິນຍານໃນໄຟຊຳລະຈະໄດ້ຮັບສ່ວນບຸນກຸສົນທີ່ພວກເຮົາອຸທິດໃຫ້ພວກເຂົາ. ແລະເມື່ອພວກເຂົາຫລຸດຈາກຄວາມຜູກມັດໃນໄຟຊຳລະແລ້ວ, ພວກເຂົາຈະວິງວອນພາວະນາໃຫ້ພວກເຮົາຕໍ່ໜ້າພຣະເຈົ້າ.

ເພາະສະນັ້ນຕະຫລອດເດືອນພະຈິກນີ້ຈຶ່ງເປັນໂອກາດໃຫ້ພວກເຮົາໄດ້ສະແດງອອກເຖິງຄວາມເປັນໜຶ່ງດຽວໃນຄວາມເຊື່ອແລະໃນຄຳພາວະນາລະຫວ່າງຜູ້ເປັນແລະຜູ້ຕາຍ. ເພື່ອສັກວັນໜຶ່ງພວກເຮົາຈະໄດ້ພົບພໍ້ກັນອີກຄັ້ງໜຶ່ງພ້ອມກັບຍາດຕິພີ່ນ້ອງແລະບັນດານັກບຸນໃນວິມານສະຫວັນນັ້ນເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ